ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ ເລກທີ 372/ຈທວ

ນະຄອນຫຼວງວຽງຈັນ, ວັນທີ 08 ທັນວາ 2022

# ແຈ້ງການ

ເຖິງ: - ບັນດາພາກສ່ວນຕ່າງໆທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ

- ວິສາຫະກິດທີ່ກ່ຽວຂ້ອງ

ເລື່ອງ: ໂຈະການເຄື່ອນໄຫວທຸລະກິດ ຕໍ່ວິສາຫະກິດທີ່ຖືກຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຈຳນວນ 173 ຫົວໜ່ວຍ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໃບນຳສົ່ງແຈ້ງຖອນໃບອະນຸຍາດດຳເນີນທຸລະກິດຮ້ານແລກປ່ຽນເງິນຕາ ຈາກກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 1752/ກນງ, ລົງວັນທີ 20 ຕຸລາ 2022.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຖືເປັນກຽດແຈ້ງມາຍັງ ບັນດາພາກສ່ວນຕ່າງໆທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ ແລະ ແຈ້ງເຖິງວິສາຫະກິດທີ່ຖືກຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຊາບ ດັ່ງນີ້:

1. ໂຈະການເຄື່ອນໄຫວທຸລະກິດຕໍ່ວິສາຫະກິດທີ່ຖືກຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຈຳນວນ 173 ຫົວໜ່ວຍ ຕາມໃບນຳສົ່ງຈາກກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 1752/ກນງ, ລົງວັນທີ 20 ຕຸລາ 2022. (ລາຍຊື່ວິສາຫະກິດທີ່ຖືກໂຈະການເຄື່ອນໄຫວທຸລະກິດ ແມ່ນສາມາດກວດສອບຕາມລາຍຊື່ທີ່ລະບຸໃນ QR Code ດ້ານລຸ່ມຂອງແຈ້ງການສະບັບນີ້).

2. ຜົນຂອງການໂຈະການເຄື່ອນໄຫວທຸລະກິດ ມີດັ່ງນີ້:

2.1. ຫ້າມ ວິສາຫະກິດທີ່ຖືກໂຈະການເຄື່ອນໄຫວທຸລະກິດ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳເອົາໃບທະບຽນວິສາຫະກິດດັ່ງກ່າວໄປເຄື່ອນໄຫວທຸລະກິດ ຢ່າງເດັດຂາດ. ໃນກໍລະນີລະເມີດ ຈະຖືກປະຕິບັດມາດຕະການ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ປະມວນກົດໝາຍອາຍາ ຢ່າງເຂັ້ມງວດ.

2.2. ໃຫ້ ວິສາຫະກິດທີ່ຖືກໂຈະການເຄື່ອນໄຫວທຸລະກິດ ເຂົ້າມາພົວພັນກັບເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກໃບທະບຽນວິສາຫະກິດ ເພື່ອສະເໜີຍຸບເລີກວິສາຫະກິດ ຫຼື ສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍໃນເວລາ ຫົກສິບ ວັນລັດຖະການ ນັບແຕ່ວັນແຈ້ງການສະບັບນີ້ໄດ້ລົງເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ (www.ned.moic.gov.la) ເປັນຕົ້ນໄປ.



Scanned with CamScanner

2.3. ພາຍຫຼັງສິ້ນສຸດກຳນົດເວລາ ຕາມທີ່ກຳນົດໄວ້ໃນຂໍ້ 2.2 ຂອງແຈ້ງການສະບັບນີ້ແລ້ວ, ຫາກວິສາຫະກິດ ບໍ່ເຂົ້າມາດຳເນີນຕາມຂັ້ນຕອນໃດໜຶ່ງຂອງຂໍ້ດັ່ງກ່າວ, ເຈົ້າໜ້າທີ່ທະບຽນວິສາຫະກິດກ່ຽວຂ້ອງ ຈະຍ້າຍຂໍ້ມູນວິສາຫະກິດດັ່ງກ່າວໄປຢູ່ບັນຊີວິສາຫະກິດທີ່ບໍ່ເຄື່ອນໄຫວທຸລະກິດ. ວິສາຫະກິດທີ່ຖືກຍ້າຍຂໍ້ມູນນັ້ນ ຍັງມີພັນທະ ແລະ ຄວາມຮັບຜິດຊອບຕໍ່ໜີ້ສິນທັງໝົດທີ່ເກີດຂຶ້ນ./

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ./

ເຈົ້າໜ້າທີ່ທະບຽນວິສາຫະກິດ

ອະພິສິດ ແສງສຸລິວົງ

ລາຍຊື່ວິສາຫະກິດທີ່ຖືກໃຈະ

ບ່ອນສົ່ງ:
- ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ 1 ສະບັບ;
- ກົມສ່ວຍສາອາກອນ ກະຊວງການເງິນ 1 ສະບັບ;
- ເຈົ້າໜ້າທີ່ທະບຽນວິສາຫະກິດທົ່ວປະເທດ 1 ສະບັບ;
- ສ່ວນສາອາກອນປະຈຳແຂວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.



Scanned with CamScanner